**<u>ແຜນການສອນ:</u>**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 02 ພຶສພາ 2010 (05-02-2010)**

---

## ຢູ່ໃນພຣະຣັສມີຂອງພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** (ປະຖົມມະການ 1:26-28ກ; 2:7, 15-22)

**ເປົ້າໝາຍຂອງບົດຮຽນ:**

ບົດຮຽນນີ້ແມ່ນກ່ຽວກັບການທີ່ພຣະເຈົ້າໄດ້ຊົງສ້າງຜູ້ຊາຍແລະຜູ້ຍິງແລະການຊົງຕັ້ງການແຕ່ງງານຂຶ້ນໃຫ້ເປັນສາຍສັມພັນແກ່ພວກເຂົາ.

**ຄວາມສຳຄັນຂອງບົດຮຽນ:**

ປະເພນີເບິ່ງຄືວ່າການແຕ່ງງານເປັນສາຍສັມພັນທີ່ຖືກຕ້ອງຕາມກົດໝາຍທາງດຽວ. ຫຼືເປັນການຜູກມັດຂອງສັງຄົມສຳລັບ "ໃຫ້ທັງສອງຮັກກັນນານເທົ່ານານ." ພຣະຄັມພີສອນວ່າພຣະເຈົ້າໄດ້ສ້າງຕັ້ງການແຕ່ງງານໃຫ້ເປັນສາຍສັມພັນສັກສິດລະຫວ່າງຊາຍຜູ້ນຶ່ງແລະຍິງຜູ້ນຶ່ງ.ຊ່ອຍໜູນໃຈທ່ານໃຫ້ສນັບສນູນຊັບສິນຕໍ່ການຮັບໃຊ້ໃນຄຣິສຕະຈັກຂອງທ່ານ

**ຜົນສະທ້ອນຕໍ່ຊີວິດ:**

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ເຂົ້າໃຈແລະຕັດສິນໃຈເດັດຂາດຕໍ່ການແຕ່ງງານຊຶ່ງເປັນການອອກແບບຂອງພຣະເຈົ້າອັນເປັນສາຍສຳພັນທີ່ສັກສິດລະຫວ່າງຊາຍຜູ້ນຶ່ງຕໍ່ຍິງຜູ້ນຶ່ງ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ໂລກໄດ້ມອງເຫັນການແຕ່ງງານໃນສມັຍນີ້ວ່າເປັນແນວໃດ? ສິ່ງເຫລົ່ານີ້ໄດ້ມີການກະທົບກະເທືອນຕໍ່ການແຕ່ງງານຢູ່ໃນໂບດແນວໃດ?
- ພຣະເຈົ້າຊົງສ້າງຊາຍ ແລະຍິງແລ້ວກໍໃຫ້ແຕ່ງງານເປັນຄູ່ຜົວເມັຽກັນລະຫວ່າງຊາຍດຽວແລະຍິງດຽວ ຢູ່ກິນດ້ວຍກັນເທົ່າສ້ຽງຊີວິດຂອງເຂົາ. ພວກເຮົາຕ້ອງຈົດຈຳການສາຣະພາບ ສັນຍາຂໍ້ຜູດມັດທີ່ຊາຍແລະຍິງໄດ້ເຮັດສັນຍາຕໍ່ກັນໃນເວລາແຕ່ງງານກັນ ແລະຄຳໝັ້ນສັນຍານີ້ກໍໄດ້ທຳຊ້ອງພຣະພັກຂອງພຣະເຈົ້າດ້ວຍ.

1. <u>ຊາຍ ແລະ ຍິງ:</u> (ປະຖົມມະການ 1:26-28ກ)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປະຖົມມະການ 1:26-28ກ.
- ໃນຂນະທີ່ທ່ານສອນບົດຮຽນນີ້, ໃຫ້ແກ່ຜູ້ທີ່ແຕ່ງງານໃໝ່, ຜູ້ທີ່ຍັງບໍ່ທັນມີລູກ ຫລືຜູ້ທີ່ເປັນໝັນ ແລະໜຸ່ມສາວ ແນະນຳໃຫ້ເຂົາເຈົ້າຈົດຈຳໃຫ້ດີ.
- ໃຫ້ນັກຮຽນຂຽນຄຳໂອວາດທີ່ພຣະເຈົ້າຊົງໃຫ້ໄວ້ແກ່ ຊາຍແລະຍິງ (ຜົວ ເມັຽ) ຊຶ່ງອີງຕາມຂໍ້ 28ກ ນັ້ນ. ສົນທະນາກັນກ່ຽວຂ້ອງກັບຄຳສັ່ງນີ້ ແລ້ວຂຽນຄຳຕອບໃສ່ກະດານ.
- ໃຫ້ຈັດນັກຮຽນເປັນ 2 ກຸ່ມ. ໃຫ້ກຸ່ມທີ 1 ຄົ້ນຄວ້າ ສົນທະນາກັນເຖິງເຣື່ອງທີ່ພຣະເຈົ້າສັ່ງໃຫ້ມີລູກເຕົ້າຢ່າງມາກມາຍ ແລະໃຫ້ມີເຊື້ອສາຍຢັ່ງຢາຍຢູ່ເຕັມແຜ່ນດິນໂລກໃຫ້ຕິງປະເດັນກັບໃນສມັຍນັ້ນຢ່າງໃດ. ໃຫ້ກຸ່ມທີ 2 ສົນທະນາເຣື່ອງຄຳສັ່ງຂອງພຣະເຈົ້າພຣະເຈົ້າສັ່ງໃຫ້ເກີດຜົນຢ່າງຫລວງຫລາຍ ແລະເຕັມແຜ່ນດິນໂລກໃຫ້ຕິງກັບປະເດັນໃນສມັຍນີ້ຢ່າງໃດ. ແລ້ວໃຫ້ຜູ້ຕາງໜ້າແຕ່ລະກຸ່ມບອກຄຳຕອບທີ່ເຂົາເຈົ້າໄດ້ສລຸບມາ.
- ໃນຂນະທີ່ພຣະເຈົ້າໄດ້ຊົງສັ່ງໃຫ້ເກີດຜົນຢ່າງຫລວງຫລາຍ ແລະເພີ້ມທະວີຂຶ້ນເຕັມແຜ່ນດິນໂລກນັ້ນ ເປັນການເພີ້ມພູນພົລເມືອງໃຫ້ເຕັມແຜ່ນດິນ, ແລະກໍເປັນການສຳຄັນທີ່ ຊາຍແລະຍິງຕ້ອງຮ່ວມຈິດຮ່ວມໃຈກັນໃນສາຍສັມພັນຂອງເຂົາເຈົ້າກັບພຣະເຈົ້າກັບລູກໆ. ໃນສມັຍນີ້, ກໍຍັງແມ່ນຄຳສັ່ງດຽວກັນ ຄວາມໝາຍດຽວກັນ. ຜົວເມັຽ ໃຫ້ຮັກສາສາຍສັມພັນກັນໃຫ້ແໜ້ນແຟ້ນແລະອວຍພອນແກ່ລູກໆດ້ວຍ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ປະຖົມມະການ 1:26-28ກ)

1. ຂໍ້ພຣະທັມເຫລົ່ານີ້ໄດ້ສະທ້ອນເຖິງລັກສະນະພິເສດໃນສາຍສັມພັນລະຫວ່າງພຣະເຈົ້າກັບມະນຸດແນວໃດ?
2. ພາຣະໜ້າອັນໃດທີ່ພຣະເຈົ້າໄດ້ຊົງມອບໃຫ້ທີ່ກ່ຽວກັບການຊົງສ້າງຂອງພຣະອົງ?
3. ແມ່ນອັນໃດທີ່ເປັນລັກສະນະສະເພາະທີ່ພຣະອົງຊົງສັ່ງຜູ້ຊາຍ ແລະຜູ້ຍິງ?
4. ເຮັດແນວໃດຈຶ່ງຈະໃຫ້ຄຣິສຕຽນ ຄົນໜຸ່ມຂອງພວກເຮົາຍອມຮັບ ປະຕິບັດ ໄວ້ວາງໃຈໃນຄຳສັ່ງຂອງພຣະເຈົ້າທີ່ວ່າ ໃຫ້ເກີດຜົນຢ່າງຫລວງຫລາຍ ແລະເພີ້ມທະວີຂຶ້ນໃຫ້ເຕັມແຜ່ນດິນໂລກນີ້?

2. <u>ບາງຢ່າງທີ່ຂາດເຂີນໃນທີ່ສຸຂເສີມ:</u> (ປະຖົມມະການ 2:7,15-20)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປະຖົມມະການ 2:7,15-20
- ໃຫ້ນັກຮຽນຄົ້ນຫາໃນພຣະທັມປະຖົມມະການບົດທີ 1:26-28ກ, ແລະ ບົດທີ 2:7,15-20 ແລ້ວຊອກຫາສິ່ງທີ່ແຕກຕ່າງຣະຫວ່າງ 2 ການອະທິບາຍລາຍລະອຽດຂອງການຊົງສ້າງຕາມຄຳຕອບຈາກຄຳຖາມທີ 2 ແລະທີ 3. ທີ່ພວກເຮົາເຫັນໃນຣະຫວ່າງການບັນລະຍາຍ ຂອງການຊົງສ້າງໃນສອງບົດນີ້ ມີຫຍັງແດ່ທີ່ມີຄວາມແຕກຕ່າງກັນ?
- ໃນຊີວິດຂອງອາດາມນັ້ນ ມີບາງສິ່ງທີ່ຂາດຢູ. ຜູ້ຊິດຊ່ອຍ. ຜູ້ໃດຜູ້ນຶ່ງທີ່ຄືກັບລາວ. ທຸກໆສິ່ງໃນສວນເອເດັນດີທີ່ສຸດແລ້ວ, ແຕ່ຍັງອັນນຶ່ງທີ່ຍັງບໍ່ໄດ້ຊົງສ້າງໃຫ້ຄົບຖ້ວນຕາມຄວາມຕ້ອງການຂອງອາດາມທີ່ຈະເປັນເພື່ອນພຣະເຈົ້າໄດ້ຊົງຮູ້ກ່ອນອາດາມຈະມີຄວາມຮູ້ສຶກຢ່າງນັ້ນ, ລາວຢາກຈະຕື່ມເຕີມໃຫ້ຄວາມຕ້ອງການຂອງລາວຄົບສົມບູນ. ດັ່ງນັ້ນພຣະອົງຈຶ່ງສ້າງຜູ້ຍິງໃຫ້ເປັນຂອງຂວັນເປັນຜູ້ຢູ່ຄຽງຂ້າງລາວ.
- ສິ່ງທີ່ໜ້າສົນໃຈຄື ທຳອິດພຣະເຈົ້າໄດ້ຊົງສ້າງຜູ້ຊາຍແລະລໍຖ້າຈົນກວ່າມີຄວາມຕ້ອງການມີເພື່ອນທີ່ເໝາະສົມແລະກໍເຫັນໄດ້ຢ່າງແຈ່ມແຈ້ງວ່າແຕ່ກ່ອນອາດາມບໍ່ທັນມີຄູ່ຢູ່ຄຽງຂ້າງທີ່ເປັນຮູບຮ່າງຄືກັນກັບລາວ ກັບ

ຫລັງຈາກໄດ້ຄູ່ທີ່ທີ່ຄືກັບລາວແລ້ວແຕກຕ່າງກັນແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປະຖົມມະການ 2:7,15-20)

1. ພຣະເຈົ້າໄດ້ຊົງສ້າງມະນຸດແຕກຕ່າງຈາກການຊົງສ້າງສິ່ງອື່ນໆ ທັງໝົດທີ່ພຣະອົງຊົງສ້າງແນວໃດ? ຂໍ້ 7.
2. ການທີ່ພຣະເຈົ້າໄດ້ຊົງສ້າງຜູ້ຊາຍຂຶ້ນມາກ່ອນນັ້ນທ່ານຄິດວ່າແນວໃດ?
3. ຫລັງຈາກພຣະເຈົ້າໄດ້ເອົາອາດາມໄປໄວ້ໃນສວນເອເດນແລ້ວພຣະອົງສັ່ງອາດາມໄວ້ວ່າແນວໃດ?

3 . **<u>ຂນະທີ່ລາວນອນຍັງຫລັບຢູ່:</u>** (ປະຖົມມະການ 2:21-22)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປະຖົມມະການ 2:21-22
- ພຣະເຈົ້າຊົງຮູ້ຈັກຄວາມຕ້ອງການຂອງພວກເຮົາກ່ອນທີ່ພວກເຮົາເຮັດ. ໃຫ້ນັກຮຽນຍົກຕົວຢ່າງຄວາມຈິງຂຶ້ນມາເບິ່ງຈັກ 2-3 ຢ່າງ.
- ພຣະເຈົ້າໄດ້ຊົງຈັດຜູ້ຊົດຊ່ອຍທີ່ອາດາມຕ້ອງການ ໂດຍການສ້າງເອວາຂຶ້ນມາໃຫ້ລາວ. ພຣະອົງໄດ້ຊົງສ້າງເອວາຕ່າງຈາກທີ່ພຣະອົງຊົງສ້າງສິ່ງອື່ນໆ ຫລືທາງການສ້າງອາດາມ. ໂດຍພຣະເຈົ້າໄດ້ສ້າງເອວາໂດຍເອົາກະດູກຂ້າງຊີກນຶ່ງຂອງອາດາມ. ໃຫ້ອະທິບາຍເປັນເພາະເຫດໃດ?
- ຜູ້ຊາຍ ຜູ້ຍິງເປັນຄູ່ຢູ່ຄຽງຂ້າງກັນຊອກຫາແຕ່ງງານກັນໃຫ້ມີຄວາມສັມພັນກົມກຽວກັນຢ່າງໝັ້ນຄົງນັ້ນຄືງານຂອງພຣະເຈົ້າ.
- ບໍ່ແມ່ນໃຫ້ຜູ້ນຶ່ງຜູ້ໃດເປັນຜູ້ຮັບໃຊ້ກັນ, ເປັນລູກຈ້າງ ຫລືເປັນຂ້ອຍຂ້າກັນ ແຕ່ໃຫ້ເປັນຜູ້ອຸປຖັມຄ້ຳຊູ ຢູ່ຄຽງບ່າຄຽງໄຫລ່ ເອົາໃຈໃສ່ຊ່ວຍຊູຊື່ງກັນແລະກັນ

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ປະຖົມມະການ 2:21-22

1. ທີ່ພຣະເຈົ້າໄດ້ຊົງເລືອກໃຊ້ກະດູກຂ້າງຊີກນຶ່ງຂອງອາດາມມາສ້າງເປັນຜູ້ຍິງນັ້ນທ່ານຄິດວ່າແນວໃດ?
2. ເປັນຫຍັງພຣະເຈົ້າຈຶ່ງລໍຖ້າຈົນພຣະອົງຊົງສ້າງທຸກສິ່ງອື່ນແລະໃຫ້ອາດາມໃສ່ຊື່ແລ້ວກ່ອນທີ່ອາດາມມີຄວາມຮູ້ສຶກຕ້ອງການເພື່ອນທີ່ເປັນຜູ້ຊົດຊ່ອຍລາວ?
3. ເປັນດ້ວຍເຫດໃດບາງເທື່ອຄົນຈຶ່ງກ້າວກ່າຍໃນຄວາມພໍພຣະທັຍຂອງພຣະເຈົ້າທີ່ຈະປະທານຄູ່ຄອງໃນຊີວິດຂອງເຂົາເຈົ້າ?
4. ແມ່ນຫຍັງທີ່ຄຣິສຕຽນຄວນຮັກສາຊີວິດການແຕ່ງງານໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າໄດ້ຊົງມີແຜນການໃຫ້ຜູ້ຊາຍ ແລະຜູ້ຍິງຢູ່ດ້ວຍກັນ, ພວກເຮົາຄວນຈະເຫັນພ້ອມກັບພຣະອົງສິ່ງທີ່ຂາດເຂີນໃນຊີວິດຂອງພວກເຮົານັ້ນຄື ເມື່ອພວກເຮົາຢູ່ໂດດດ່ຽວຄົນດຽວ ຊຶ່ງໄດ້ເຫັນຢູ່ໃນຄວາມສັມພັນຄຣິສຕຽນ.
- ເພາະວ່າພວກເຮົາດຳເນີນຊີວິດຢູ່ໃນຄວາມເຊື່ອໃນພຣະເຈົ້າ, ພວກເຮົາຕ້ອງຢູ່ດ້ວຍຄວາມເຊື່ອໝັ້ນ ແລ້ວພຣະອົງຈະຊົງທຳງານຕາມແຜນການຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**